ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 20 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 26.11.2020.

# ຄຳສັ່ງ
## ວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

ເຖິງ: ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມໜັງສືສະເໜີຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 09/ຄຕຟງ, ລົງວັນທີ 29 ຕຸລາ 2020.

ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ມີປະສິດທິພາບ ແລະ ສອດຄ່ອງກັບລະບຽບກົດໝາຍ ພາຍໃນ ແລະ ສາກົນ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ມອບໃຫ້ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ), ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ປະຕິບັດຕາມຂັ້ນຕອນ, ວິທີການໃນການກັກ, ການຍຶດ ແລະ ການອາຍັດ ແລະ ແກ້ໄຂ ທຶນທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງສະບັບນີ້.
2. ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ໃນຄຳສັ່ງສະບັບນີ້ ໝາຍເຖິງ ການເຄື່ອນໄຫວຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຖືກກຳນົດເປັນເປົ້າໝາຍໃຫ້ມີການນຳໃຊ້ມາດຕະການລົງໂທດທາງດ້ານການເງິນ ຕາມທີ່ໄດ້ກຳນົດໄວ້ໃນ ຍັດຕິ 1718 (ປີ 2006) ແລະ ຍັດຕິ 2231 (ປີ 2015) ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຕາມເອກະສານຊ້ອນທ້າຍ ທີ່ກ່ຽວຂ້ອງຂອງຍັດຕິ ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ທີ່ໄດ້ຖືກສ້າງຕັ້ງຂຶ້ນຕາມຍັດຕິ 1718 (ປີ 2006) ແລະ ຍັດຕິ 2231 (ປີ 2015) ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ (ສປຊ) ແລະ ຍັດຕິທີ່ສືບທອດປ່ຽນແທນ.

3. ທຶນ ທີ່ຕ້ອງກັກ, ຍຶດ ແລະ ອາຍັດ ຕາມຄຳສັ່ງສະບັບນີ້ ແມ່ນລວມເອົາທັງເງິນ ຫຼື ຊັບສິນ ທາງດ້ານການເງິນ, ຊັບພະຍາກອນທາງດ້ານເສດຖະກິດ, ຊັບສິນທຸກປະເພດ ທັງເປັນຮູບປະທຳ ຫຼື ນາມມະທຳ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ໄດ້ມາຢ່າງໃດກໍ່ຕາມ ແລະ ເອກະສານທາງດ້ານກົດໝາຍ ຫຼື ເຄື່ອງມືໃນຮູບແບບໃດໜຶ່ງ ລວມທັງຮູບແບບ ເອເລັກໂຕຣນິກ ຫຼື ດີຈີຕອນ, ຫຼັກຖານທີ່ສະແດງ ເຖິງ/ຫຼື ດອກເບຍໃນ ກອງທຶນ ຫຼື ຊັບສິນໃດໜຶ່ງ ລວມທັງສິນເຊື່ອທະນາຄານ, ແຊັກເດີນທາງ, ແຊັກທະນາຄານ, ເງິນສັ່ງຈ່າຍ, ຫຸ້ນ, ຫຼັກຊັບ, ພັນທະບັດ, ໜັງສືສິນເຊື່ອ, ດອກເບ້ຍອື່ນໆ, ເງິນປັນຜົນ ຫຼື ລາຍໄດ້ອື່ນໆ ຈາກ/ຫຼື ຕາມມູນຄ່າທີ່ເກີດຈາກ ກອງທຶນ ຫຼື ຊັບສິນອື່ນ ແລະ ຊັບສິນໃດ ທີ່ອາດຈະເປັນການໃຊ້ເພື່ອການໄດ້ຮັບ ທຶນ ສິນຄ້າ ຫຼື ການບໍລິການ.
4. ການສະເໜີໃຫ້ ສະພາຄວາມໝັ້ນຄົງ ອົງການ ສປຊ ກຳນົດບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ໃຫ້ປະຕິບັດ ດັ່ງນີ້:
   4.1. ມອບໃຫ້ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີລາຍຊື່ຜູ້ທີ່ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຕໍ່ ຄຕຟງ ເພື່ອພິຈາລະນາຮັບຮອງ ແລະ ດຳເນີນການຕາມຂັ້ນຕອນ ທີ່ອົງການ ສປຊ ກຳນົດ. ສຳລັບການກຳນົດເອົາລາຍຊື່ເຂົ້າບັນຊີ ຕ້ອງອີງຕາມພື້ນຖານຕົ້ນຕໍ ດັ່ງນີ້:
      4.1.1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງກັບແຜນການດຳເນີນງານກ່ຽວກັບນິວເຄຼຍ ລວມທັງແຜນການດຳເນີນງານອື່ນ ທີ່ກ່ຽວຂ້ອງກັບອາວຸດທຳລາຍລ້າງຜານ ແລະ ແຜນການດຳເນີນງານກ່ຽວກັບຂີປະນາວຸດ;
      4.1.2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ໃຫ້ການສະໜັບສະໜູນໃຫ້ແກ່ໂຄງການກ່ຽວກັບນິວເຄຼຍ ແລະ ຂີປະນາວຸດທີ່ມີອານຸພາບທຳລາຍລ້າງຜານ ລວມໄປເຖິງການໃຫ້ການສະໜັບສະໜູນຜ່ານວິທີການທີ່ບໍ່ສອດຄ່ອງກັບກົດໝາຍ;
      4.1.3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ກະທຳ ໃນນາມ ຫຼື ຕາມຄຳສັ່ງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ກຳນົດໄວ້ໃນ ຂໍ້ 4.1.1 ແລະ 4.1.2 ຂອງຄຳສັ່ງສະບັບນີ້;
      4.1.4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງ ຫຼື ຢູ່ພາຍໃຕ້ການຄວບຄຸມ ທັງທາງກົງ ຫຼື ທາງອ້ອມຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກຳນົດໄວ້ໃນ ຂໍ້ 4.1.1 ແລະ 4.1.2 ຂອງຄຳສັ່ງສະບັບນີ້;
      4.1.5. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຊ່ວຍໃນການຫຼີກລ່ຽງມາດຕະການລົງໂທດ ຫຼື ການຝ່າຝືນຂໍ້ກຳນົດຂອງຍັດຕິ 1718 (ປີ 2006) ແລະ ຍັດຕິ 1874 (ປີ 2009);
      4.1.6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ໃຫ້ການສະໜັບສະໜູນ ແກ່ໂຄງການ ທີ່ຖືກຫ້າມ ຫຼື ກິດຈະການທີ່ຖືກຫ້າມ ໂດຍຍັດຕິທີ່ກ່ຽວຂ້ອງ ຫຼື ເພື່ອຫຼົບຫຼີກຂໍ້ກຳນົດຂອງຍັດຕິ;
      4.1.7. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສ່ວນຮ່ວມ, ກ່ຽວຂ້ອງໂດຍກົງ ຫຼື ໃຫ້ການສະໜັບສະໜູນແກ່ການແຜ່ຂະຫຍາຍກິດຈະການທາງດ້ານນິວເຄຼຍ ຫຼື ການມີສ່ວນຮ່ວມໃນການຈັດຊື້ລາຍການຕ້ອງຫ້າມ ເປັນຕົ້ນ ແມ່ນສິ່ງຂອງ, ສິນຄ້າ, ອຸປະກອນ, ວັດສະດຸ ແລະ ເຕັກໂນໂລຊີ ທີ່ລະບຸໄວ້ໃນ ຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ທີ່ກ່ຽວຂ້ອງ;
      4.1.8. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໃຫ້ການຊ່ວຍເຫຼືອແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກກຳນົດໃນບັນຊີລາຍຊື່ ໃນການຫຼົບຫຼີກ ຫຼື ດຳເນີນການ ທີ່ຂັດກັບຍັດຕິຂອງ ອົງການ ສປຊ;
      4.1.9. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກະທຳໃນນາມ ຫຼື ຕາມຄຳສັ່ງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກກຳນົດໄວ້ໃນ ຂໍ້ 4.1.7 ແລະ 4.1.8 ຂອງຄຳສັ່ງສະບັບນີ້ ຫຼື ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຫຼົ່ານັ້ນ ເປັນເຈົ້າຂອງ ຫຼື ມີອຳນາດຄວບຄຸມ.

4.2. ທຸກການສະເໜີເອົາຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດ ເຂົ້າ ຫຼື ລຶບອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ແມ່ນຕ້ອງສົ່ງໃຫ້ ຄຕຟງ ພິຈາລະນາ. ຖ້າ ຄຕຟງ ພິຈາລະນາແລ້ວ ເຫັນວ່າມີຫຼັກຖານໜັກແໜ້ນ ຄຕຟງ ຕ້ອງຮັບຮອງເອົາຕາມການສະ ເໜີດັ່ງກ່າວ;

4.3. ບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຕ້ອງລວມເອົາບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີລາຍຊື່ ໃນບັນຊີຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ອົງການ ສປຊ ທີ່ຖືກສ້າງຂຶ້ນພາຍໃຕ້ຍັດຕິ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ສະບັບເລກທີ ຍັດຕິ 1718 (ປີ 2006), ຍັດຕິ 2231 (ປີ 2015) ແລະ ຍັດຕິອື່ນທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ນີ້ ຕ້ອງຖືກລວມເຂົ້າໃນ ຫຼື ບັນທຶກຢູ່ໃນ ບັນຊີລາຍຊື່ຂອງຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໂດຍທັນທີ ເມື່ອທາງສະພາຄວາມໝັ້ນຄົງ ອົງການ ສປຊ ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ກຳນົດລາຍຊື່ ເຂົ້າ ຫຼື ຈົນກວ່າຈະຖືກລຶບອອກຈາກ ບັນຊີລາຍຊື່ທີ່ກ່ຽວຂ້ອງ;

4.4. ມອບໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ກະຊວງ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ເປັນເຈົ້າການຕິດຕາມ ແລະ ກວດກາ ລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຢ່າງເປັນປະຈຳ ແລ້ວລາຍງານຕໍ່ກະຊວງປ້ອງກັນຄວາມສະຫງົບ ເພື່ອປັບປຸງບັນຊີລາຍຊື່ເຫຼົ່ານັ້ນ;

4.5. ການແຈ້ງ, ການສະເໜີ, ການເພີ່ມ ແລະ ການລຶບ ບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໃຫ້ປະຕິບັດ ດັ່ງນີ້:

4.5.1. ມອບໃຫ້ກະຊວງການຕ່າງປະເທດ ນຳສົ່ງບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ສະບັບປັບປຸງ ໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍທັນທີ ເມື່ອໄດ້ຮັບບັນຊີລາຍຊື່ດັ່ງກ່າວ ຈາກອົງການ ອົງການ ສປຊ;

4.5.2. ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນຜູ້ແຈ້ງບັນຊີລາຍຊື່ ສະບັບປັບປຸງ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍທັນທີ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຈ້ງບັນຊີລາຍຊື່ດັ່ງກ່າວໄປຍັງວິສາຫະກິດໄປສະນີ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍທັນທີ ພ້ອມທັງເຜີຍແຜ່ຜ່ານທາງເວັບໄຊຂອງລັດຖະບານ ຫຼື ເວັບໄຊຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

4.5.3. ກໍລະນີ ຫາກມີຂໍ້ມູນຫຼັກຖານທີ່ພຽງພໍຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຖືກຕາມເງື່ອນໄຂຂອງການກຳນົດລາຍຊື່ ຕາມທີ່ໄດ້ລະບຸໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດ ອົງການ ສປຊ ທີ່ກຳລັງເຄື່ອນໄຫວຢູ່ ແຕ່ຍັງບໍ່ໄດ້ເອົາເຂົ້າໃນບັນຊີລາຍຊື່ ຕາມການກຳນົດຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາສະເໜີເອົາເຂົ້າໃນບັນຊີລາຍຊື່ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ.

ກໍລະນີ ພາຍຫຼັງການປະສານງານຂອງກະຊວງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງຂໍ້ນີ້ ຊຶ່ງກະຊວງປ້ອງກັນຄວາມສະຫງົບ ໄດ້ພິຈາລະນາແລ້ວ ເຫັນວ່າມີຫຼັກຖານພຽງພໍທີ່ຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຫາກຖືກຕາມເງື່ອນໄຂຂອງການກຳນົດລາຍຊື່

ຕາມທີ່ໄດ້ລະບຸໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດອົງການ ອົງການ ສປຊ ແມ່ນໃຫ້ກະຊວງການຕ່າງປະເທດ ສະເໜີຕື່ມລາຍຊື່ດັ່ງກ່າວເຂົ້າໃນບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໂດຍນຳໃຊ້ແບບຟອມທີ່ເປັນມາດຕະຖານ ແລະ ຖືກຮັບຮອງເອົາ ໂດຍຄະນະກຳມະການທີ່ກ່ຽວຂ້ອງຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຊຶ່ງລວມທັງຄຳຖະແຫຼງລະອຽດກ່ຽວກັບກໍລະນີດັ່ງກ່າວ.

4.5.4. ກໍລະນີ ມີຂໍ້ມູນຫຼັກຖານທີ່ພຽງພໍຢັ້ງຢືນໄດ້ວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ບໍ່ໄດ້ຢູ່ໃນເງື່ອນໄຂໃນການກຳນົດລາຍຊື່ເຂົ້າໃນບັນຊີທີ່ໄດ້ລະບຸໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດ ອົງການ ສປຊ ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ສະເໜີຖອນຈາກບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ກຳນົດ.

ກໍລະນີ ພາຍຫຼັງການປະສານງານຂອງກະຊວງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງຂໍ້ນີ້ ຊຶ່ງກະຊວງປ້ອງກັນຄວາມສະຫງົບ ພິຈາລະນາແລ້ວ ເຫັນວ່າມີຫຼັກຖານພຽງພໍຢັ້ງຢືນວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຫາກບໍ່ຖືກຕາມເງື່ອນໄຂຂອງການກຳນົດລາຍຊື່ຕາມຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດ ອົງການ ສປຊ ແມ່ນໃຫ້ກະຊວງການຕ່າງປະເທດ ສະເໜີເອົາລາຍຊື່ດັ່ງກ່າວອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໂດຍນຳໃຊ້ແບບຟອມທີ່ເປັນມາດຕະຖານ ແລະ ຖືກຮັບຮອງເອົາໂດຍຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຊຶ່ງລວມທັງການອະທິບາຍລາຍລະອຽດກ່ຽວກັບເຫດຜົນ ທີ່ບໍ່ຖືກຕາມເງື່ອນໄຂຂອງການກຳນົດເຂົ້າບັນຊີລາຍຊື່ ຂອງ ອົງການ ສປຊ ແລະ ຈະຕ້ອງສົ່ງຄຳຮ້ອງຂໍ ໂດຍກົງໄປຍັງຫ້ອງການກວດກາເອກະລາດ ຂອງ ອົງການ ສປຊ.

5. ການສະເໜີປ່ຽນແປງ ບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໃຫ້ປະຕິບັດ ດັ່ງນີ້:

5.1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກການກຳນົດລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ສາມາດສົ່ງຄຳຮ້ອງຂໍໄປຍັງ ອົງການໄອຍະການປະຊາຊົນສູງສຸດ ເພື່ອຂໍໃຫ້ພິຈາລະນາກ່ຽວກັບ ການຖືກກຳນົດເຂົ້າໃນບັນຊີລາຍຊື່ຂອງ ອົງການ ສປຊ ດັ່ງກ່າວ;

5.2. ອົງການໄອຍະການປະຊາຊົນສູງສຸດ ປະສານກັບກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນກ່ຽວຂ້ອງເພື່ອຮັບພິຈາລະນາຄົ້ນຄວ້າຂໍ້ມູນຫຼັກຖານທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮ້ອງຂໍກ່ຽວກັບການກຳນົດບັນຊີລາຍຊື່ຜູ້ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ. ສຳລັບຂັ້ນຕອນ ແລະ ວິທີການ ແມ່ນປະຕິບັດຕາມລະບຽບຫຼັກການ ທີ່ອົງການໄອຍະການປະຊາຊົນສູງສຸດ ວາງອອກ;

5.3. ການສະເໜີຂໍປ່ຽນແປງ ກ່ຽວກັບບັນຊີລາຍຊື່ຜູ້ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ທີ່ເປັນບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ແມ່ນໃຫ້ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 4.5.3 ແລະ 4.5.4 ຂອງຄຳສັ່ງສະບັບນີ້. ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນບັນຊີລາຍຊື່ຜູ້ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຮັບຮູ້ກ່ຽວກັບທາງເລືອກ ເພື່ອຮ້ອງຂໍໃຫ້ເອົາລາຍຊື່ອອກຈາກບັນຊີຂອງ ອົງການ ສປຊ.

6. ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ພົວພັນກັບຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໃຫ້ປະຕິບັດ ດັ່ງນີ້:

6.1. ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ:

- ຕ້ອງກວດກາລູກຄ້າຂອງຕົນ ທີ່ມີການເຄື່ອນໄຫວ ຫຼື ມີສ່ວນພົວພັນກັບທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ຢ່າງເປັນປະຈຳ ແລະ ຕ້ອງກວດກາທັນທີ ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຈາກສຳນັກງານຂໍ້ມູນຕ້ານການຟອກເງິນ;
- ຕ້ອງນຳໃຊ້ມາດຕະການເບື້ອງຕົ້ນ ໃນການຢຸດຕິ ແລະ ໃຫ້ກັກທຶນ ດັ່ງກ່າວທັນທີ ເມື່ອເຫັນວ່າລູກຄ້າຂອງຕົນ ຫຼື ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຜູ້ທີ່ໄດ້ຖືກກຳນົດໃນບັນຊີລາຍຊື່ຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຫຼື ມີການເຄື່ອນໄຫວເຮັດທຸລະກຳທີ່ພົວພັນກັບທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້. ພ້ອມດຽວກັນນັ້ນ ກໍ່ຕ້ອງລາຍງານດ່ວນໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ທັນທີ;
- ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດ ທຶນດັ່ງກ່າວ ທັນທີ ເມື່ອໄດ້ຮັບການລາຍງານຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ.

ຄຳສັ່ງຍຶດ ຫຼື ອາຍັດ ທຶນ ມີຜົນສັກສິດ ຈົນກ່ວາຈະມີການປັບປຸງ ຫຼື ການປ່ຽນແປງ ບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຈາກສະພາຄວາມໝັ້ນຄົງ ອົງການ ອົງການ ສປຊ.

ພາຍໃນກຳນົດເວລາ ສາມສິບ ວັນ, ນັບແຕ່ວັນອອກຄຳສັ່ງຍຶດ ຫຼື ອາຍັດ ທຶນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ ແລະ ທຶນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7 ຂອງຄຳສັ່ງສະບັບນີ້. ສຳລັບການພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ ແລະ ທຶນທີ່ມີລັກສະນະສະຫຼັບສັບຊ້ອນ ຫຼື ຕ້ອງໄດ້ກວດສອບກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍ ຫົກສິບ ວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບກວດກາ ແລະ ຮິບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍ ເກົ້າສິບ ວັນ ນັບແຕ່ວັນອອກຄຳສັ່ງ ຍຶດ ຫຼື ອາຍັດ ເປັນຕົ້ນໄປ.

ກໍລະນີ ເຫັນວ່າ ທຶນດັ່ງກ່າວ ບໍ່ກ່ຽວຂ້ອງ ຫຼື ພົວພັນກັບຜູ້ທີ່ຢູ່ໃນບັນຊີລາຍຊື່ຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແຈ້ງເປັນລາຍລັກອັກສອນ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອຮັບຊາບ ແລະ ຍົກເລີກການນຳໃຊ້ມາດຕະການເບື້ອງຕົ້ນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ປະຕິບັດຕາມໜ້າທີ່ ດ້ວຍຄວາມບໍລິສຸດໃຈຕາມ ທີ່ໄດ້ກຳນົດໄວ້ໃນ ຂໍ້ 6.1 ຂອງຄຳສັ່ງສະບັບນີ້ ຈະບໍ່ມີຄວາມຮັບຜິດຊອບທາງດ້ານກົດໝາຍ ຕໍ່ທຸກການກະທຳຂອງຕົນ. ກໍລະນີຫາກປະຕິບັດໜ້າທີ່ ດ້ວຍຄວາມ ປະໝາດ, ເລີນເລີ້ ຫຼື ບໍ່ປະຕິບັດຕາມໜ້າທີ່ ຕ້ອງຮັບຜິດຊອບທາງດ້ານກົດໝາຍ ຕໍ່ທຸກການກະທຳຂອງຕົນ.

6.2. ການກັກ, ການຍຶດ ແລະ ການອາຍັດທຶນ ທີ່ໂອນ, ສົ່ງຜ່ານ ແລະ ໃຊ້ບໍລິການທາງໄປສະນີ:

- ມອບໃຫ້ວິສາຫະກິດໄປສະນີ ກວດກາເປັນປະຈຳ ແລະ ຕ້ອງກວດກາທັນທີໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບບັນຊີລາຍຊື່ຂອງຜູ້ທີ່ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຈາກກະຊວງປ້ອງກັນຄວາມສະຫງົບ;
- ວິສາຫະກິດໄປສະນີ ຕ້ອງນຳໃຊ້ມາດຕະການເບື້ອງຕົ້ນ ເຊັ່ນ: ການຢຸດຕິ ແລະ ໃຫ້ກັກທຶນ ດັ່ງກ່າວທັນທີ ເມື່ອເຫັນວ່າລູກຄ້າຂອງຕົນ ຫຼື ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຜູ້ທີ່ໄດ້ຖືກກຳນົດບັນຊີລາຍຊື່ຜູ້ທີ່

ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຫຼື ມີການເຄື່ອນໄຫວເຮັດທຸລະກຳ ທີ່ພົວພັນກັບທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້. ພ້ອມດຽວກັນນັ້ນ ກໍ່ຕ້ອງລາຍງານ ໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ທັນທີ;

- ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດ ທຶນດັ່ງກ່າວ ທັນທີ ເມື່ອໄດ້ຮັບການລາຍງານຈາກວິສາຫະກິດໄປສະນີ;
- ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດ ທຶນ ທັນທີ ໃນກໍລະນີ ເຊິ່ງໜ້າ ແລະ ຮີບດ່ວນ ຫາກເຫັນວ່າມີໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ ໄດ້ສົ່ງອອກຈາກ ສປປ ລາວ ໄປຍັງຕ່າງປະເທດ ຫຼື ຈາກຕ່າງປະເທດສົ່ງເຂົ້າມາ ສປປ ລາວ ທີ່ບັນຈຸ ຫຼື ມີ ທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ຕ້ອງເປີດ ຫຼື ກວດກາ ເພື່ອພິສູດຂໍ້ເທັດຈິງ ພາຍໃນກຳນົດເວລາ ສີ່ສິບແປດ ຊົ່ວໂມງ.

ຄຳສັ່ງຍຶດ ຫຼື ອາຍັດ ມີຜົນສັກສິດ ຈົນກ່ວາຈະມີການປັບປຸງ ຫຼື ການປ່ຽນແປງ ລາຍຊື່ໃນບັນຊີລາຍຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວຈາກສະພາຄວາມໝັ້ນຄົງ ອົງການ ອົງການ ສປຊ.

ພາຍໃນກຳນົດເວລາ ສາມສິບ ວັນ, ນັບແຕ່ວັນອອກຄຳສັ່ງຍຶດ ຫຼື ອາຍັດ ທຶນ ທີ່ພົວພັນກັບຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ທີ່ມີໃນໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ, ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕັດສິນຕໍ່ຜູ້ຖືກສົງໃສ ແລະ ທຶນ ດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7 ຂອງຄຳສັ່ງສະບັບນີ້. ສຳລັບການພິຈາລະນາຕັດສິນຕໍ່ຜູ້ຖືກສົງໃສ ແລະ ທຶນທີ່ມີລັກສະນະສະຫຼັບຊັບຊ້ອນ ຫຼື ຕ້ອງໄດ້ກວດສອບກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍ ຫົກສິບ ວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບ; ກວດກາ ແລະ ຮີບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍ ເກົ້າສິບ ວັນ ນັບແຕ່ວັນອອກຄຳສັ່ງ ຍຶດ ຫຼື ອາຍັດດັ່ງກ່າວເປັນຕົ້ນໄປ.

ກໍລະນີ ເຫັນວ່າທຶນທີ່ຖືກຍຶດ ຫຼື ອາຍັດນັ້ນ ຫາກບໍ່ກ່ຽວຂ້ອງ ຫຼື ພົວພັນກັບຜູ້ ທີ່ຢູ່ໃນບັນຊີລາຍຊື່ກ່ຽວກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແຈ້ງເປັນລາຍລັກອັກສອນ ໄປຍັງວິສາຫະກິດໄປສະນີ ເພື່ອຮັບຊາບ ແລະ ຍົກເລີກການນຳໃຊ້ມາດຕະການເບື້ອງຕົ້ນດັ່ງກ່າວ.

ວິສາຫະກິດໄປສະນີ ກໍລະນີ ຫາກປະຕິບັດຕາມໜ້າທີ່ ດ້ວຍຄວາມບໍລິສຸດໃຈ ທີ່ໄດ້ກຳນົດໄວ້ໃນ ຂໍ້ 6.2 ຂອງຄຳສັ່ງສະບັບນີ້ ຈະບໍ່ມີຄວາມຮັບຜິດຊອບທາງດ້ານກົດໝາຍ ຕໍ່ທຸກການກະທຳຂອງຕົນ. ກໍລະນີຫາກປະຕິບັດໜ້າທີ່ ດ້ວຍຄວາມ ປະໝາດ, ເລີນເລີ້ ຫຼື ບໍ່ກະທຳຕາມໜ້າທີ່ ຕ້ອງຮັບຜິດຊອບທາງດ້ານກົດໝາຍ ຕໍ່ທຸກການກະທຳຂອງຕົນ.

6.3. ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ພົວພັນກັບຜູ້ແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຢູ່ພາກສ່ວນອື່ນ:

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຕ້ອງນຳໃຊ້ມາດຕະການເບື້ອງຕົ້ນ ເພື່ອຢຸດຕິ ແລະ ກັກ ທຶນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ໂດຍທັນທີ ເມື່ອພົບວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕົນກຳລັງສ້າງສາຍພົວພັນທາງດ້ານທຸລະກິດ ຫຼື ເຄື່ອນໄຫວທຸລະກຳຢູ່ນັ້ນ ໄດ້ຖືກກຳນົດລາຍຊື່ເຂົ້າຢູ່ໃນບັນຊີລາຍຊື່ຜູ້ພົວພັນກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ຫຼື ພົບວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ພົວພັນກັບທຶນ ຕາມທີ່ກຳນົດໄດ້ໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ຕ້ອງລາຍງານໄປຍັງ ກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍທັນທີ.

ກໍລະນີ ຜ່ານການເຄື່ອນໄຫວວຽກງານວິຊາສະເພາະ, ການພິຈາລະນາຂໍ້ມູນຂ່າວກອງ ຫຼື ການແຈ້ງຄວາມຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກວດພົບ ຫຼື ການພົບເຫັນ ທຶນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງສະບັບນີ້ ໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດ ທຶນດັ່ງກ່າວທັນທີ ກໍລະນີ ທີ່ມີຫຼັກຖານພຽງພໍ.

ພາຍໃນກຳນົດເວລາ ສາມສິບ ວັນ, ນັບແຕ່ວັນອອກຄຳສັ່ງຍຶດ ຫຼື ອາຍັດ ທຶນຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3ຂອງຄຳສັ່ງສະບັບນີ້ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ ແລະ ທຶນດັ່ງກ່າວຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7 ຂອງຄຳສັ່ງສະບັບນີ້. ສຳລັບການພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ ແລະ ທຶນທີ່ມີລັກສະນະສະຫຼັບຊັບຊ້ອນ ຫຼື ຕ້ອງໄດ້ກວດສອບກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍຫົກສິບວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບກວດກາ ແລະ ຮິບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍເກົ້າສິບວັນ ນັບແຕ່ວັນອອກຄຳສັ່ງ ຍຶດ ຫຼື ອາຍັດດັ່ງກ່າວ ເປັນຕົ້ນໄປ.

7. ການແກ້ໄຂກ່ຽວກັບທຶນທີ່ໄດ້ມີການກັກ, ຍຶດ ແລະ ອາຍັດ ໃຫ້ປະຕິບັດ ດັ່ງນີ້:
   7.1. ສົ່ງຄືນໃຫ້ຜູ້ເປັນເຈົ້າຂອງ ທີ່ຄຸ້ມຄອງຢ່າງຖືກຕ້ອງຕາມກົດໝາຍ ຖ້າຫາກທຶນນັ້ນຖືກຜູ້ອື່ນ ນຳໃຊ້ ຫຼື ຄຸ້ມຄອງໂດຍຜິດກົດໝາຍ ເຂົ້າໃນການເຄື່ອນໄຫວກ່ຽວກັບ ການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ;
   7.2. ກໍລະນີ ໄດ້ມີການພິຈາລະນາແລ້ວ ເຫັນວ່າ ຄົບເງື່ອນໄຂໃນການຍົກເວັ້ນ ຕາມຍັດຕິ 1718 (ປີ 2006) ແລະ ຍັດຕິ 2231 (ປີ 2015) ນັ້ນ ຕ້ອງອະນຸຍາດໃຫ້ສາມາດເຂົ້າເຖິງ ເງິນ ຫຼື ຊັບສິນອື່ນ ທີ່ໄດ້ກຳນົດໄວ້ໃນຍັດຕິເຫຼົ່ານີ້;
   7.3. ສຳລັບບັນຊີເງິນຝາກ ທີ່ຖືກອາຍັດ ຕາມຍັດຕິ 1718 (ປີ 2006) ແລະ ຍັດຕິ 2231 (ປີ 2015) ຕ້ອງພິຈາລະນາ ອະນຸຍາດໃຫ້ມີການເພີ່ມດອກເບ້ຍ ຫຼື ລາຍໄດ້ອື່ນ ເຂົ້າໄປໃນບັນຊີດັ່ງກ່າວ ຫຼື ອະນຸຍາດ ໃຫ້ມີການຊຳລະເງິນ ຕາມຂໍ້ກຳນົດ ໃນສັນຍາ, ຂໍ້ຕົກລົງ ຫຼື ຂໍ້ຜູກພັນ ທີ່ເກີດຂຶ້ນກ່ອນວັນທີ ບັນຊີເຫຼົ່ານັ້ນ ໂດຍມີເງື່ອນໄຂວ່າ ດອກເບ້ຍດັ່ງກ່າວ ລວມທັງລາຍໄດ້ອື່ນ ແລະ ການຊຳລະເງິນ ທັງໝົດນັ້ນ ຈະຍັງຄົງຖືກອາຍັດຕໍ່ໄປ.
   7.4. ການອາຍັດຕາມ ຍັດຕິ 1737 (ປີ 2006) ທີ່ໄດ້ດຳເນີນການຕໍ່ ຫຼື ດຳເນີນການໄປຕາມ ຍັດຕິ 2231 (ປີ 2015) ແມ່ນຫ້າມບໍ່ເຮັດໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກກຳນົດໃນບັນຊີລາຍຊື່ ພົ້ນອອກຈາກພັນທະໃນການຊຳລະເງິນ ຕາມສັນຍາທີ່ເຮັດຂຶ້ນກ່ອນມີການລະບຸຊື່ບຸກຄົນ ຫຼື ນິຕິບຸກຄົນດັ່ງກ່າວ ໄວ້ໃນບັນຊີລາຍຊື່ ໂດຍມີເງື່ອນໄຂ ດັ່ງນີ້:
      7.4.1. ພິຈາລະນາແລ້ວ ເຫັນວ່າ ສັນຍານັ້ນ ບໍ່ໄດ້ກ່ຽວຂ້ອງກັບ ລາຍການທີ່ຖືກຫ້າມ ວັດຖຸ, ອຸປະກອນ, ສິນຄ້າ, ເຕັກໂນໂລຊີ, ການຝຶກອົບຮົມ, ຄວາມຊ່ວຍເຫຼືອທາງດ້ານການເງິນ ແລະ ຄວາມຊ່ວຍເຫຼືອທາງດ້ານອື່ນໆ, ການລົງທຶນ, ການເປັນນາຍໜ້າ ຫຼື ການບໍລິການຕ່າງໆ ທີ່ໄດ້ກ່າວໄວ້ໃນ ຍັດຕິ 2231 (ປີ 2015) ແລະ ຍັດຕິອື່ນທີ່ສືບຕໍ່ຈາກຍັດຕິດັ່ງກ່າວ;
      7.4.2. ພິຈາລະນາແລ້ວ ເຫັນວ່າ ບຸກຄົນ ຫຼື ນິຕິບຸກຄົນ ນັ້ນ ບໍ່ທັນໄດ້ຮັບການຊຳລະເງິນ ບໍ່ວ່າຈະທາງກົງ ຫຼື ທາງອ້ອມ ຕາມທີ່ໄດ້ກຳນົດໄວ້ໃນຍັດຕິ 2231 (ປີ 2015);
      7.4.3. ມີການຍື່ນໜັງສືແຈ້ງລ່ວງໜ້າ ຕໍ່ສະພາຄວາມໝັ້ນຄົງ ອົງການ ສປຊ ເພື່ອໃຫ້ຊາບເຖິງ ເຈດຕະນາທີ່ຈະຊຳລະ ຫຼື ຈະຮັບການຊຳລະດັ່ງກ່າວ, ເຈດຕະນາ ທີ່ຈະມອບອຳນາດ ໃນກໍລະນີທີ່ເໝາະສົມ ເພື່ອໃຫ້ຍົກເລີກການອາຍັດເງິນດັ່ງກ່າວ ລວມທັງຊັບສິນທາງດ້ານການເງິນ ຫຼື ເຄື່ອງມືທາງດ້ານການເງິນອື່ນທີ່ຈະນຳໃຊ້ເພື່ອຈຸດປະສົງນີ້ ໂດຍຈະຕ້ອງຍື່ນໜັງສືແຈ້ງລ່ວງໜ້າກ່ອນ ສິບ ວັນ ລັດຖະການ ທີ່ມີການອະນຸຍາດດັ່ງກ່າວ.

7.5. ຍົກເລີກການຍຶດ, ການອາຍັດ ແລະ ສົ່ງທຶນຄືນ ຖ້າຫາກຜູ້ນັ້ນ ຫາກຖືກເອົາອອກ ຫຼື ລຶບຊື່ອອກ ຈາກບັນຊີລາຍຊື່ຜູ້ພົວພັນກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ;

7.6. ກໍລະນີ ບໍ່ສາມາດລະບຸຜູ້ເປັນເຈົ້າຂອງ ຫຼື ຜູ້ທີ່ຄຸ້ມຄອງ ທຶນຖືກຕ້ອງຕາມກົດໝາຍໄດ້ ໃຫ້ຮິບມາເປັນຂອງລັດ ຫຼື ທຳລາຍຖິ້ມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຊັບສິນຂອງລັດ ຫຼື ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບຜົນກະທົບຈາກການກັກ, ຍຶດ ແລະ ອາຍັດ ທຶນໃຫ້ຮ້ອງຂໍໄປຫາອົງການໄອຍະການປະຊາຊົນສູງສຸດ ເພື່ອຂໍໃຊ້ມາດຕະການໃດໜຶ່ງ ແກ້ໄຂຕາມທີ່ໄດ້ລະບຸໄວ້ໃນ ຂໍ້ 7.1 ຫາ 7.5 ຂອງຄຳສັ່ງສະບັບນີ້.

ກໍລະນີ ອົງການໄອຍະການປະຊາຊົນສູງສຸດ ພິຈາລະນາກ່ຽວກັບທຶນ ທີ່ໄດ້ຖືກຍຶດ ຫຼື ອາຍັດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7.1 ຫາ 7.5 ຂອງຄຳສັ່ງສະບັບນີ້ ໃຫ້ອົງການໄອຍະການປະຊາຊົນສູງສຸດ ກຳນົດເງື່ອນໄຂທີ່ຈຳເປັນຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອປ້ອງກັນບໍ່ໃຫ້ມີການນຳເອົາທຶນນັ້ນ ໄປເຄື່ອນໄຫວກ່ຽວກັບການແຜ່ພາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ກໍລະນີ ອົງການໄອຍະການປະຊາຊົນສູງສຸດ ໄດ້ພິຈາລະນາແກ້ໄຂກ່ຽວກັບທຶນທີ່ໄດ້ຖືກຍຶດ ຫຼື ອາຍັດໄວ້ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7.2 ຫາ 7.4 ຂອງຄຳສັ່ງສະບັບນີ້. ອົງການໄອຍະການປະຊາຊົນສູງສຸດ ຈະຕ້ອງສະໜອງທຸກເອກະສານ ແລະ ໃບແຈ້ງການທີ່ຈຳເປັນໃຫ້ຄະນະກຳມະການກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ເພື່ອຂໍອະນຸມັດຈາກຄະນະກຳມະການກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໂດຍຜ່ານກະຊວງການຕ່າງປະເທດ ກ່ອນທີ່ຈະມີການນຳໃຊ້ທຶນດັ່ງກ່າວ.

ທຶນທີ່ຖືກກັກ, ຍຶດ ແລະ ອາຍັດ ຕ້ອງຍັງຄົງຖືກກັກ, ຍຶດ ແລະ ອາຍັດ ຈົນກ່ວາຈະມີການນຳໃຊ້ມາດຕະການໃດໜຶ່ງ ເພື່ອແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 7.1 ຫາ 7.6 ຂອງຄຳສັ່ງສະບັບນີ້.

**8.** ການລະເມີດຄຳສັ່ງສະບັບນີ້ ຈະຖືກມາດຕະການລົງໂທດ ດັ່ງນີ້:

8.1. ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກບໍ່ປະຕິບັດຕາມພັນທະຂອງຕົນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 6 ຂອງຄຳສັ່ງສະບັບນີ້ ຈະຖືກກ່າວເຕືອນ ແລະ ປັບໃໝໃນອັດຕາສ່ວນ 0.0001% ຂອງຊັບສິນທັງໝົດໃນເວລາທີ່ລະເມີດ. ແຕ່ຕໍ່າສຸດບໍ່ໃຫ້ຫຼຸດ ສາມລ້ານກີບ ແລະ ສູງສຸດບໍ່ໃຫ້ເກີນ ສອງຮ້ອຍລ້ານກີບ;

8.2. ບຸກຄົນໃດ ທີ່ດຳເນີນການກ່ຽວກັບ ທຶນ ຫຼື ຊັບສິນ ໂດຍທີ່ຮູ້ວ່າ ທຶນ ຫຼື ຊັບສິນນັ້ນ ແມ່ນໃຜເປັນເຈົ້າຂອງ, ຖືກຄວບຄຸມ ຫຼື ໄດ້ຖືກຄອບຄອງ ທັງທາງກົງ ຫຼື ທາງອ້ອມ ທັງໝົດ ຫຼື ບາງສ່ວນ ໂດຍ ຫຼື ກະທຳໃນນາມຂອງ/ຫຼື ຄຳສັ່ງ ຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກກຳນົດພາຍໃຕ້ ຍັດຕິ 1718 ແລະ 2231 ຈະຖືກປັບໃໝ 20% ຂອງມູນຄ່າທຶນ ຫຼື ຊັບສິນ ທັງໝົດທີ່ລະເມີດ;

8.3. ບຸກຄົນໃດ ທີ່ເຮັດໃຫ້ ທຶນ ຫຼື ຊັບສິນ ໂດຍທີ່ຮູ້ວ່າ ທຶນ ຫຼື ຊັບສິນດັ່ງກ່າວ ກຳລັງຖືກປ່ຽນຮູບ ເຮັດໃຫ້ພ້ອມນຳໃຊ້ ໂດຍທາງກົງ ຫຼື ທາງອ້ອມ ທັງໝົດ ຫຼື ບາງສ່ວນ ສຳລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກກຳນົດພາຍໃຕ້ຍັດຕິ 1718 ແລະ 2231 ຫຼື ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ເປັນເຈົ້າຂອງ ແລະ ຖືກຄວບຄຸມ ຫຼື ກະທຳໃນນາມຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກກຳນົດພາຍໃຕ້ຍັດຕິ 1718 ແລະ 2231 ຈະຖືກປັບໃໝ 20% ຂອງມູນຄ່າທຶນ ຫຼື ຊັບສິນ ທັງໝົດທີ່ລະເມີດ.

**9.** ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ